ສຳນັກງານ ຄຄຊ
ຂາເຂົ້າ
ເລກທີ...0672.........
ວັນທີ..27 JUN 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 26 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 05 ມິຖຸນາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 04-08/06/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,50% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກການສັ່ງຊື້ຂອງໂຮງງານຂອງສະຫະລັດອາເມລິກາ ໃນເດືອນ 04/2018 ຫຼຸດລົງ ຢູ່ໃນລະດັບ 0,8% ຈາກ 1,7% ໃນເດືອນຜ່ານມາ ແລະ ຕົວເລກດັດຊະນີຜູ້ຈັດການຝ່າຍຈັດຊື້ຂອງພາກສ່ວນການຂາຍຍ່ອຍຂອງສະຫະພາບເອີຣົບ ໃນເດືອນ 05/2018 ເພີ່ມຂຶ້ນ ຢູ່ໃນລະດັບ 51,7 ຈຸດ ຈາກ 48,6 ຈຸດ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 28/05-01/06/2018 | ອາທິດນີ້ 04-08/06/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1704 | 1,1763 | -0,50% |
| ເຢນ/ໂດລາ | 109,27 | 109,32 | -0,05% |
| ບາດ/ໂດລາ | 31,98 | 32,05 | -0,22% |
| ເປໂຊ/ໂດລາ | 52,52 | 52,83 | -0,60% |
| ຣູເປັຍ/ໂດລາ | 13.890,00 | 13.925,00 | -0,25% |
| ໂດລາສິງກະໂປ/ໂດລາ | 1,3370 | 1,3355 | 0,11% |
| ຢວນ/ໂດລາ | 6,4154 | 6,4090 | 0,10% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 3,20% ຈາກ 67,15 ໂດລາ/ບາເຣວ ມາເປັນ 65,00 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 2,07 ລ້ານບາເຣວ ຂອງອາທິດທີ 01/06/2018, ຈາກຫຼຸດລົງ 3,62 ລ້ານບາເຣວ ໃນອາທິດຜ່ານມາ;

- ລາຄາຄຳເພີ່ມຂຶ້ນ 0,02% ຈາກ 1.299,47 ໂດລາ/ອອນ ມາເປັນ 1.299,68 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

2. ສະພາບການຊື້-ຂາຍອັດຕາແລກປ່ຽນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,04% ແຕ່ອ່ອນຄ່າລົງ 0,26% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 1,21% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,22% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 01/06/2018 | | | ອາທິດນີ້ 08/06/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.407,61 | 8.430,33 | 8.417,67 | 8.403,49 | 8.425,49 | 8.414,33 | 0,05% | 0,06% | 0,04% | -1,21% | -1,17% | -1,21% |
| ບາດ | 262,90 | 264,52 | 264,00 | 263,68 | 265,07 | 264,67 | -0,30% | -0,21% | -0,26% | -3,28% | -3,14% | -3,22% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 1,46% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,20%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,37% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,92%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (01-07/06/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 5,54 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 25,18 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 30,72 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 520,66 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 162,10 ລ້ານບາດ ແລະ ຂາຍເງິນບາດໄດ້ 682,76 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ຫຼຸດລົງ 80,55% ແລະ ເງິນບາດ ຫຼຸດລົງ 75,13%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 26,69 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 127,60 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,17 ລ້ານໂດລາ ແລະ ເງິນບາດ ຈຳນວນ 24,35 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ທຫລ ຂາຍເງິນໂດລາ ຈຳນວນ 40 ລ້ານໂດລາ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 25-31/05/2018 | | ອາທິດນີ້ 01-07/06/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **46,95** | **165,14** | **25,18** | **162,10** | **-82,76%** | **-77,97%** |
| - ທ/ຄທຸລະກິດລັດ | 14,71 | 77,24 | 10,11 | 52,32 | -81,32% | -78,25% |
| - ທ/ຄທຸລະກິດອື່ນໆ | 32,24 | 87,90 | 15,07 | 109,78 | -83,61% | -77,84% |
| **2. ການຂາຍເງິນຕາຕ່າງປະເທດ** | **30,61** | **547,42** | **30,72** | **682,76** | **-78,26%** | **-74,34%** |
| - ທ/ຄທຸລະກິດລັດ | 16,25 | 204,87 | 20,88 | 184,69 | -73,41% | -78,28% |
| - ທ/ຄທຸລະກິດອື່ນໆ | 14,36 | 342,55 | 9,84 | 498,07 | -84,32% | -72,49% |
| **ຊື້-ຂາຍສຸດທິ ທທກ** | **16,34** | **-382,28** | **-5,54** | **-520,66** | **-217,12%** | **-72,96%** |
| - ຜິດດ່ຽງຊື້-ຂາຍ | 34,80% | -231,49% | -22,00% | -321,20% | -779,01% | 22,78% |
| **- ມູນຄ່າການຊື້-ຂາຍ** | **77,56** | **712,56** | **55,90** | **844,86** | **-80,55%** | **-75,13%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **63,28** | **-96,80** | **-26,69** | **-127,60** | | |
| - ທຫລ ຊື້ຈາກ ທທກ | 80,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 16,72 | 96,80 | 26,69 | 127,60 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **4,84** | **71,25** | **0,17** | **24,35** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-40,00** | **0,00** | **-40,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 40,00 | 0,00 | 40,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 06/2018 ຄາດວ່າຈະຢູ່ໃນລະດັບ 2,35% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ຫຼຸດລົງ 79,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 25,19 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 2,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 71,85 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 767 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 200 ສະບັບ ເທົ່າກັບ 20,68% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 352,81 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 18,66 ຕື້ກີບ ເທົ່າກັບ 5,58%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-07/06/2018) ມີທັງໝົດ 3.775 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.721 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 85 ຕື້ກີບ ຈາກ 1.054,83 ຕື້ກີບ ມາເປັນ 969,33 ຕື້ກີບ ເທົ່າກັບ 8,01%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 54 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 136,31 ຕື້ກີບ ຈາກ 6,59 ຕື້ກີບ ມາເປັນ 142,90 ຕື້ກີບ ເທົ່າກັບ 2.068,31%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 914,78 ຈຸດ ຫຼຸດລົງ ຈາກ 918,79 ຈຸດ ຫຼື ເທົ່າກັບ 0,44% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 311.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,59 ຕື້ກີບ ຫຼຸດລົງ 14,62% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 42,22% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| **BCEL** | 272.600 | 1.435.900.000 | 5.400 | **256.100** | **1.359.825.000** | **5.400** | -6,05 | -5,30 | - | 0,00 |
| **EDL-GEN** | 79.400 | 356.305.000 | 4.450 | **48.900** | **218.935.000** | **4.400** | -38,41 | -38,55 | -50 | -1,12 |
| **LWPC** | 1.200 | 6.635.000 | 6.600 | **100** | **720.000** | **7.200** | -91,67 | -89,15 | 600 | 9,09 |
| **PTL** | 2.800 | 4.630.000 | 1.600 | **2.100** | **3.510.000** | **1.600** | -25,00 | -24,19 | - | 0,00 |
| **SVN** | - | - | 2.850 | **400** | **1.140.000** | **2.850** | | | - | 0,00 |
| **PCD** | 11.900 | 16.300.000 | 1.350 | **1.500** | **1.895.000** | **1.350** | -87,39 | -88,37 | - | 0,00 |
| **LCC** | 23.300 | 43.175.000 | 2.050 | **2.000** | **4.650.000** | **2.400** | -91,42 | -89,23 | 350 | 17,07 |
| ທັງໝົດ | 391.200 | 1.862.945.000 | - | **311.100** | **1.590.675.000** | | -20,48 | -14,62 | | |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ຫ້ອງປະຊຸມຫ້ອງວ່າການສູນກາງພັກ), ❷ ກອງປະຊຸມມາດຕະການກະຕຸ້ນເສດຖະກິດມະຫາພາກ (ຫສນຍ), ❸ ກອງປະຊຸມເປີດກວ້າງກ່ຽວກັບ (ຮ່າງ) ຂໍ້ຕົກລົງວ່າດ້ວຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຮ່ວມກັບສະຖາບັນການເງິນ, ❹ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ, ❺ ກອງປະຊຸມປຶກສາຫາລືກ່ຽວກັບແຜນວຽກຂອງຄະນະຮັບຜິດຊອບ ວຽກງານເຊື່ອມໂຍງພາຍໃຕ້ຂະແໜງການທະນາຄານໃນຂອບເຂດອົງການການຄ້າໂລກ, ❻ ກອງປະຊຸມສ່ອງແສງສາຍພັກ-ສາຍລັດປະຈຳເດືອນ ພຶດສະພາ 2018 ແລະ ❼ ກອງປະຊຸມຄົບຄະນະຮັບຜິດຊອບການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມຫຼັກການບາເຊວ;
- ທ່ານຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການຢູ່ເຂດທ້ອງຖິ່ນພາກເໜືອ ແຂວງຊຽງຂວາງ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ, ❷ ກອງປະຊຸມຄະນະສະເພາະກິດແກ້ໄຂບັນຫາບໍລິສັດ ພີເອັສ, ❸ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ, ❹ ກອງປະຊຸມທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດວຽກງານການນຳໃຊ້ບັນດາທະນາຄານຮ່ວມກັນໃນ ສປປ ລາວ ປະຈຳ 06 ເດືອນຕົ້ນປີ 2018 ແລະ ປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດການໂອນເງິນຂ້າມທະນາຄານດ້ວຍຕູ້ເອທີເອັມ, ❺ ກອງປະຊຸມໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນ ໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ" ແລະ ❻ ກະກຽມເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ພາກເໜືອ ແລະ ພາກໃຕ້;

- **ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ:** ❶ ຄະນະທະນາຄານພັດທະນາແຫ່ງຊາດຈີນ ແລະ ❷ ຄະນະອົງການການເງິນສາກົນ.

ຫົວໜ້າຫ້ອງການ

ພົດສະຖາພອນ ແກ້ວວົງວິຈິດ